# ໜັງສືຄາລາຕັບ (ຄາລາຊີ)

ໃຈຄວາມສຳຄັນ ມີເສລີພາບດ້ວຍອົງພຣະຄຣິດ ຫລື ໃຫ້ຕັ້ງຢູ່ ໃນຄວາມຊອບທັມດ້ວຍຄວາມເຊື່ອ

ຈຳນວນບົດ ໖ ບົດ

## ເວລາທີ່ຂຽນແລະຜູ້ຮັບໜັງສືນີ້

໑. ຈົດໝາຍສບັບນີ້ທ່ານໂປໂລໄດ້ຂຽນເມື່ອ ຄ.ສ. ໔໗–໔໘

໒. ເພິ່ນໄດ້ຝາກໜັງສືນີ້ໄປຍັງບັນດາຄຣິສຕະຈັກທັ້ງແຂວງຄາລາຊີ ແຕ່ ພວກເຮົາບໍ່ຮູ້ຈັກວ່າແມ່ນຄຣິສຕະຈັກໃດແທ້ ພວກຄຣູສອນສ່ວນ ຫລາຍເຊື່ອວ່າແມ່ນຄຣິສຕະຈັກຝ່າຍເໜືອຂອງແຂວງຄາລາຊີ ຈຶ່ງ ທ່ານໂປໂລໄດ້ຈັດຕັ້ງໄວ້ ຄາວເພິ່ນທ່ຽວໄປ ໃນຄັ້ງທີສອງ ແລະທີສາມ ນັ້ນ (ກິຈການ ໑໖:໖, ໑໘, ໒໓)

໓. ທ່ານໂປໂລຖືພວກພີ່ນ້ອງເຫລົ່ານີ້ເປັນລູກໃນຄວາມເຊື່ອ ແລະເພິ່ນ ໄດ້ຮັກແພງພວກເຂົາຫລາຍ (໔:໑໙—໒໐) ດ້ວຍວ່າເພິ່ນເອງເປັນ ຜູ້ສົ່ງຂ່າວປະເສີດໄປຍັງພວກເຂົາ (໑:໑໑ ໑໒) ແລະເຂົາກໍໄດ້ ເຊື່ອແຕ່ບໍ່ເຫິງປານໃດ ໑:໖

## ວ່າດ້ວຍຄວາມມຸ່ງໝາຍ

ພວກຄຣິສຕຽນທີ່ເປັນຊາວຢູດາລາງຄົນ ໄດ້ໄປຢ້ຽມຢາມພວກ ພີ່ນ້ອງຊາວຕ່າງປະເທດທີ່ເຊື່ອໃໝ່ ແລ້ວໄດ້ສອນຂໍ້ຄວາມທີ່ບໍ່ຖືກຕ້ອງ

ກັບຄຳສັນຍາໃໝ່ ຊຶ່ງຜິດກັບຄຳສອນຂອງທ່ານໂປໂລ ເພາະພວກເຂົາຕ້ອງການຢາກໃຫ້ພວກຄຣິສຕະຈັກປະຖິ້ມຄຳສອນຂອງທ່ານໂປໂລ ແລ້ວມາຮັບເອົາຄຳສອນຝ່າຍສາສນາຢູດາ (໑:໗; ໔:໑໘; ໕:໑໐) ພວກເຂົາສອນວ່າ ຄົນທີ່ເຊື່ອຈະກາຍເປັນຄົນຊອບທັມດ້ວຍຄວາມເຊື່ອເທົ່ານັ້ນບໍ່ໄດ້ ແຕ່ຈະຕ້ອງທຳພິທີຕັດໜັງທີ່ລັບດ້ວຍ ສະນັ້ນພວກເຂົາຈຶ່ງບັງຄັບຄົນທີ່ເຊື່ອໃໝ່ຖືບັນຍັດຂອງທ່ານໂມເຊ ຈົນພວກພີ່ນ້ອງໃນແຂວງຄາລາຊີເກີດການວຸ້ນວາຍແລະປະຖິ້ມຄຳສອນເດີມເສັຍ ເຫດນັ້ນແຫລະທ່ານໂປໂລຈຶ່ງຂຽນໜັງສືນີ້ໄປຍັງພວກພີ່ນ້ອງດ້ວຍໃຈຮ້ອນຮົນ

## ວ່າດ້ວຍເນື້ອຄວາມ

ໃນໜັງສືໂກລິນໂທທີສອງ ທ່ານໂປໂລໄດ້ແກ້ຄວາມກ່ຽວກັບການບົວຣະບັດຂອງຕົນຢ່າງໃດ ໃນໜັງສືຄາລາຊີນີ້ ເພິ່ນກໍໄດ້ແກ້ຄວາມກ່ຽວກັບຄຳໂອອາດຫລືຫລັກຄຳສອນຂອງຕົນຢ່າງດຽວກັນນັ້ນ

໑. ເພິ່ນໄດ້ບອກ ເຫດຜົນ ທີ່ແປກ ປລາດ ກ່ຽວ ກັບການ ອອກຈາກ ຂ່າວປະເສີດຂອງເພິ່ນ ເພື່ອມາຖືເອົາຂ່າວປະເສີດແບບອື່ນອີກ ຄວາມຈິງແລ້ວຂ່າວປະເສີດແບບອື່ນນັ້ນບໍ່ມີ ມີແຕ່ຂ່າວປະເສີດທີ່ເພິ່ນໄດ້ຮັບມາຈາກອົງພຣະຄຣິດ ແລະແມ່ນອົງພຣະຄຣິດເອງໄດ້ໃຊ້ເພິ່ນໃຫ້ເປັນຜູ້ປ່າວປະກາດ (ບົດ ໑) ພວກສາວົກແລະຄຣິສຕະຈັກທັງຫລາຍໃນກຸງເຢຣູຊາເລັມກໍເຫັນດີນຳດ້ວຍ (ບົດ ໒)

໒. ທ່ານໂປໂລໄດ້ບອກວ່າ ຄຣິສຕະສາສນາມີລັກສນະຢ່າງໃດ ພຣະ-

ບັນຍັດຕ່າງກັນຢ່າງໃດກັບຂ່າວປະເສີດ ແລະກິຈການທັງຫລາຍໄດ້ສຳພັນກັນຢ່າງໃດກັບຄວາມເຊື່ອ ຄືເພິ່ນໄດ້ບອກວ່າ:

ກ. ຂ່າວປະເສີດສຳຄັນກວ່າພຣະບັນຍັດ ເພາະພຣະບັນຍັດພາໃຫ້ເຮົາເຊື່ອໃນ ຂ່າວປະເສີດ ແຕ່ພວກເຮົາຈະຖືພຣະບັນຍັດທຸກຂໍ້ບໍ່ໄດ້

ຂ. ຄວາມເຊື່ອເປັນຊ່ອງທາງໃຫ້ກາຍເປັນຄົນຊອບທັມ ສ່ວນກິຈການພາຍເຖິງຄວາມເຊື່ອແທ້ຈິງເປັນຜົນຂອງຄວາມເຊື່ອ

໓. ທ່ານໂປໂລ ໄດ້ບອກວ່າຂໍ້ບັນຍັດ ແລະຣິດຄອງທັງຫລາຍຊ່ອຍໃຫ້ພົ້ນບໍ່ໄດ້ (໔:໘-໑໐) ມີແຕ່ຄວາມເຊື່ອເທົ່ານັ້ນຊ່ອຍໃຫ້ພົ້ນແລະໃຫ້ມີຊີວິດ (໓:໑໑) ຄົນຈະກາຍເປັນຜູ້ຊອບທັມໄດ້ດ້ວຍຄວາມເຊື່ອທີ່ຈິງປະທານໃຫ້ (ບົດ ໓) ຜູ້ທີ່ຕັ້ງຢູ່ໃນຄວາມຊອບທັມຄືຜູ້ທີ່ຖືກສ້າງຂຶ້ນໃໝ່ (໖:໑໕) ແລະເນື້ອໜັງກັບຄວາມປາຖນາຂອງເນື້ອໜັງກໍຖືກຄຶງໄວ້ (໕:໒໔)

໔. ທ່ານໂປໂລ ໄດ້ດຳເນີນໄປ ດ້ວຍວິນຍານ ຄືຢູ່ໃຕ້ອຳນາດ ພຣະບັນຍັດແຫ່ງຄວາມຮັກ (໕:໑໓)